# ບົດສັງລວມຫຍໍ້ ທີ 6 ກົນໄກການຮ້ອງທຸກ

## ກ່ຽວກັບບັນດາມາດຕາ *151-155* ຂອງຮ່າງກົດໝາຍວ່າດ້ວຍທີ່ດິນ

**ຄວາມເປັນມາ**

ເພື່ອໃຫ້ກົດໝາຍວ່າດ້ວຍທີ່ດິນ ໄດ້ຮັບຈັດຕັ້ງປະຕິບັດ ເພື່ອຮັບປະກັນວ່າ ບຸກຄົນ ແລະ ຊຸມຊົນທັງໝົດ ມີສິດມີສຽງໃນການຕັດສິນໃຈວ່າ ທີ່ດິນຂອງພວກເຂົາຈະນຳໃຊ້ຄືແນວໃດ, ຕໍ່ກັບທີ່ດິນຕາມປະເພນີ ແລະ ທີ່ມີໃບຕາດິນ, ມີຄວາມສຳຄັນທີ່ຈະຕ້ອງຮັບປະກັນວ່າ ມີລະບົບການຮ້ອງທຸກ ທີ່ເປັນເອກະລາດ. ປະຈຸບັນ, ສປປ ລາວ ມີກົນໄກແບບປະເພນີ, ເຄິ່ງທາງການ, ແລະ ທາງການ ໃນການແກ້ໄຂຂໍ້ຂັດແຍ່ງລວມທັງອັນທີ່ກ່ຽວກັບທີ່ດິນ. ຂໍ້ຂັດແຍ່ງຂັ້ນທ້ອງຖິ່ນສ່ວນໃຫຍ່ແມ່ນແກ້ໄຂຜ່ານກົດປະເພນີ. ເຖິງຢ່າງໃດກໍຕາມ, ກົນໄກເຄິ່ງທາງການ ທີ່ມີຢູ່ຂັ້ນບ້ານ ແມ່ນໜ່ວຍງານໄກ່ເກ່ຍຂັ້ນບ້ານ (VMU), ຊຶ່ງມີໜ້າທີ່ໃຫ້ຄວາມຍຸຕິທຳຢູ່ຂັ້ນບ້ານ, ບາງສ່ວນກໍ່ແມ່ນແກ້ໄຂຂໍ້ຂັດແຍ່ງທາງແພ່ງ ແລະ ອາຍາທີ່ບໍ່ຮ້າຍແຮງ. ກໍລະນີທີ່ທີ່ບໍ່ສາມາດແກ້ໄຂຂັ້ນບ້ານໄດ້ ກໍສາມາດສົ່ງໃຫ້ໜ່ວຍໄກ່ເກ່ຍຂັ້ນເມືອງ (DMU). ວິທີທາງການສ່ວນໃຫຍ່ ຂອງການແກ້ໄຂຄະດີແພ່ງ ແລະ ອາຍາ ແມ່ນການນຳຂຶ້ນສານ, ຢູ່ຂັ້ນທ້ອງຖິ່ນ, ແຂວງ ແລະ ລະດັບຊາດ (ສານປະຊາຊົນສູງສຸດ). ສຸດທ້າຍ, ຄຳຮ້ອງທຸກ ສາມາດຍື່ນຕໍ່ອົງການບໍລິຫານ, ຕຸລາການ, ຫຼື ສະພາແຫ່ງຊາດ ເມື່ອ ເຈົ້າໜ້າທີ່ລັດຖະບານ ໄດ້ຕັດສິນບັນຫາ ທີ່ຂັດກັບກົດໝາຍ ຫຼື ຜົນປະໂຫຍດສ່ວນລວມ (UNDP 2011).

**ບັນຫາປະຈຸບັນ ໃນຮ່າງກົດໝາຍວ່າດ້ວຍທີ່ດິນ**

ຮ່າງກົດໝາຍວ່າດ້ວຍທີ່ດິນ ມີບາງບົດບັນຍັດໃໝ່ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທີ່ກ່ຽວຂ້ອງກັບທີ່ດິນ, ແຕ່ບໍ່ໄດ້ກວມເອົາດ້ານສຳຄັນດັ່ງນີ້:

1. ບໍ່ມີ ກົນໄກການຮ້ອງທຸກສະເພາະ ສຳລັບຂໍ້ຂັດແຍ່ງທີ່ດິນ ລະຫວ່າງ ຊາວບ້ານ ແລະ ຜູ້ລົງທຶນ. ບາງໂຄງການລົງທຶນຂະໜາດໃຫຍ່, ໂດຍສະເພາະໃນຂະແໜງພະລັງງານ ແລະ ບໍ່ແຮ່, ມີການສ້າງກົນໄກການຮ້ອງທຸກດັ່ງກ່າວ. ເຖິງຢ່າງໃດກໍຕາມ, ເປັນກົນໄກທີ່ຍັງບໍ່ມີຄວາມເປັນເອກະລາດເຕັມສ່ວນ ເນື່ອງຈາກໄດ້ຮັບການສະໜອງທຶນ ໂດຍຜູ້ລົງທຶນ.
2. ໜ່ວຍງານໄກ່ເກ່ຍຂັ້ນບ້ານ ສ່ວນໃຫຍ່ ຖືກນຳໃຊ້ ເພື່ອແກ້ໄຂຂໍ້ຂັດແຍ່ງລະຫວ່າງ ຊາວບ້ານດ້ວຍກັນ ແລະ ບໍ່ໄດ້ມີ ຫຼື ບໍ່ໄດ້ຮັບມອບໝາຍໜ້າທີ່ໃຫ້ແກ້ໄຂ ຂໍ້ຂັດແຍ່ງລະຫວ່າງ ຊາວບ້ານ ແລະ ຜູ້ລົງທຶນຈາກພາຍນອກ. ໃນຂະນະທີ່ຄະດີ ສາມາດຍື່ນຕໍ່ຂັ້ນເມືອງໄດ້, ໄດ້ພົບວ່າ ຄະດີມັກຈະບໍ່ຖືກຍື່ນຕໍ່ຂຶ້ນໄປ.
3. ໃນຂະນະທີ່ ບ້ານ ສາມາດໄປຫາອົງການບໍລິຫານທີ່ກ່ຽວຂ້ອງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອແກ້ໄຂເລື່ອງບໍລິຫານ, ມັນພັດແມ່ນພາກສ່ວນດຽວກັນນີ້ທີ່ຈັດສັນທີ່ດິນ ໃຫ້ແກ່ຜູ້ລົງທຶນ, ດັ່ງນັ້ນ ຈຶ່ງມີບັນຫາເລື່ອງຜົນປະໂຫຍດທັບຊ້ອນ ແລະ ການຂາດຄວາມເປັນເອກະລາດ.
4. ການນຳຄະດີຂຶ້ນຮອດສານ ມັກຈະເຫັນວ່າມີຄ່າໃຊ້ຈ່າຍຫຼາຍ ສຳລັບຊາວບ້ານຜູ້ທຸກຍາກ. ນອກນັ້ນ, ຊາວບ້ານຍັງ

ເຫັນວ່າ ສານມີອິດທິພົນທີ່ຖືກຕ້ອງ ຫຼື ເໝາະສົມ, ໂດຍສະເພາະທີ່ວ່າ ເປັນການຍາກທີ່ຈະຊະນະຄະດີ ຖ້າເຈົ້າຫາກບໍ່ມີເງິນ ຫຼື ຄູ່ກໍລະນີຫາກມີເງິນຫຼາຍກວ່າ, ຊຶ່ງມັກຈະເປັນເຊັ່ນນັ້ນ ຖ້າບ້ານ ຮ້ອງຟ້ອງບໍລິສັດຕໍ່ສານ.

5. ການຮ້ອງທຸກຕໍ່ອົງການບໍລິຫານ, ຕຸລາການ, ຫຼື ສພຊ ເປັນທາງເລືອກ ແຕ່ມັນກໍແພງ ແລະ ສ່ຽງຫຼາຍ ເນື່ອງຈາກມັນບໍ່ໄດ້ມີການແກ້ໄຂ ດ້ວຍວິທີບໍ່ປະເຊີນໜ້າ ຕາມທີ່ຫຼາຍຊຸມຊົນຕ້ອງການ.

**ຂໍ້ສະເໜີ**

ຮ່າງກົດໝາຍວ່າດ້ວຍທີ່ດິນ ຄວນໄດ້ຮັບການປັບປຸງ ໂດຍສະເພາະໃນໝວດ XII, ເພື່ອຊ່ວຍປັບປຸງກົນໄກແກ້ໄຂຂໍ້ຂັດແຍ່ງທີ່ດິນ; ຮັບປະກັນຄວາມສະຫງົບ ແລະ ຄວາມຍຸຕິທຳ; ສ້າງຄວາມເຊື່ອໝັ້ນໃນການນຳໃຊ້ທີ່ດິນ ຂອງປະຊາຊົນ, ຫົວໜ່ວຍທຸລະກິດ, ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ; ແລະ ຫຼຸດຜ່ອນປະກົດການຫຍໍ້ທໍ້ໃນສັງຄົມ:

- ສ້າງກົນໄກການແກ້ໄຂຂໍ້ຂັດແຍ່ງ ທີ່ສາມາດເຂົ້າເຖິງ ທົ່ວປະເທດ ໂດຍຜ່ານ;
    - **ຄະນະກຳມະການທີ່ດິນທີ່ເປັນເອກະລາດ**
        - ຄະນະກຳມະການຂອງປະຊາຊົນ ຖືກຮັບຮູ້ຍ້ອນຄວາມຕັ້ງໃຈຂອງເຂົາເຈົ້າໃນການແກ້ໄຂຂໍ້ຂັດແຍ່ງທີ່ດິນ. ຄະນະດັ່ງກ່າວ ຈະເຊື່ອມໂຍງກັບສະພາແຫ່ງຊາດ ແລະ ມີສິດ ແລະ ໜ້າທີ່ໃນການສືບສວນຂໍ້ຂັດແຍ່ງທີ່ດິນ ແລະ ບັງຄັບການຈັດຕັ້ງປະຕິບັດຄວາມຍຸຕິທຳ.
    - **ອົງການແກ້ໄຂຂໍ້ຂັດແຍ່ງທີ່ດິນ**
        - ອົງການລັດຖະບານ ທີ່ຮັບຜິດຊອບສືບສວນ ຂໍ້ຂັດແຍ່ງ ແລະ ບັງຄັບປະຕິບັດຄວາມຍຸຕິທຳ, ອົງການດັ່ງກ່າວຈະ ມີພະນັກງານຢູ່ທຸກແຂວງ ແລະ ຢູ່ພາຍໃຕ້ການຊີ້ນຳ ໂດຍຄະນະກຳມະການທີ່ດິນທີ່ເປັນເອກະລາດ.
- ບຸກຄົນ ຫຼື ນິຕິບຸກຄົນ ມີສິດນຳເອົາຂໍ້ຂັດແຍ່ງທີ່ດິນ ຂຶ້ນໄປແກ້ໄຂ ໂດຍປາສະຈາກຄວາມຢ້ານກົວຈະຖືກກັ່ນແກ້ງ ຫຼື ຂົ່ມຂູ່. ຄວນມີການເພີ່ມຄວາມຮູ້ໃຫ້ແກ່ຊຸມຊົນທ້ອງຖິ່ນ ກ່ຽວກັບສິດຂອງເຂົາເຈົ້າ ໃນຂໍ້ຂັດແຍ່ງທີ່ດິນ.
- ຄວນໃຫ້ທຸກພາກສ່ວນກ່ຽວຂ້ອງ ມີສ່ວນຮ່ວມ ໃນຂະບວນການແກ້ໄຂຂໍ້ຂັດແຍ່ງທີ່ດິນ. ໂດຍສະເພາະ, ຊຸມຊົນທີ່ຖືກກະທົບ ຕ້ອງເຂົ້າຮ່ວມ.
- ຖ້າຜູ້ຖືກກະທົບຫາກບໍ່ສາມາດເຂົ້າເຖິງທີ່ປຶກສາດ້ານກົດໝາຍທີ່ເປັນເອກະລາດ, ລັດ ຈະສະໜອງການໃຫ້ບໍລິການທີ່ປຶກສາດ້ານກົດໝາຍໃຫ້ແກ່ເຂົາເຈົ້າ ໂດຍບໍ່ເສຍຄ່າ.
- ຊາວບ້ານ ຈະມີສິດໄດ້ຮັບການຊ່ວຍເຫຼືອ ຈາກອົງການຈັດຕັ້ງທີ່ບໍ່ແມ່ນຂອງລັດຖະບານ ເພື່ອຊ່ວຍເຂົາເຈົ້າໃນການຍື່ນຄຳຮ້ອງທຸກ.

- ການແກ້ໄຂຂໍ້ຂັດແຍ່ງທີ່ດິນ ດ້ານບໍລິຫານ ຄວນມອບໃຫ້ຂະແໜງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໂດຍປະສານກັບຂະແໜງການທີ່ກ່ຽວຂ້ອງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ. ຖ້າບໍ່ສາມາດຕົກລົງກັນໄດ້, ຂໍ້ຂັດແຍ່ງ ຄວນຍື່ນຕໍ່ໃຫ້ຄະນະກໍາມະການທີ່ດິນທີ່ເປັນເອກະລາດ.
- ຂໍ້ຂັດແຍ່ງທີ່ດິນຕ້ອງດໍາເນີນການຢ່າງທັນເວລາ, ແລະ ຜົນຂອງຂະບວນການຮ້ອງທຸກ ຕ້ອງແຈ້ງໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຊາບ.
- ການອຸທອນຈາກຂະບວນການຮ້ອງທຸກ ຈະຖືກພິຈາລະນາໂດຍສານ. ຄ້າຍຄືກັນ, ບັນດາຄໍາຕົກລົງທີ່ໄດ້ເຫັນດີຢູ່ໃນຂະບວນການຮ້ອງທຸກ ສາມາດບັງຄັບປະຕິບັດ ໂດຍນໍາໃຊ້ສິດອໍານາດບັງຄັບປະຕິບັດຂອງສານ.